ວາລະສານວິທະຍາສາດສັງຄົມ ມະຫາວິທະຍາໄລແຫ່ງຊາດ
ISSN: 2664-6331 | E-ISSN: 3104-8536
Homepage: https://ssj.sjnl.la/
https://doi.org/10.71026/ss.2025.01002




# ສຶກສາຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າ ໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງ ຫຼວງພະບາງ ສົກສຶກສາ 2022-2023

ຄຳຊາຍ ຈັນທະທິງ[1], ດາລາວອນ ຄຳສະຫວັນ, ມະນີວອນ ວັນພາວົງ, ອຳພັນ ຈິດຕະວົງ.
ຄຳຊາຍ ຈັນທະທິງ[1] ຫ້ອງການຈັດຕັ້ງ ແລະ ຄຸ້ມຄອງພະນັກງານ ມ. ສຸພານຸວົງ
E-mail : khamxay@su.edu.la, khamsavanhvone@gmail.com, manivone.VPV@gmail.com, am-Chithavong@yahoo.com

**ຂໍ້ມູນບົດຄວາມ** ວັນທີສົ່ງ 17/2/2025 ວັນທີປັບປຸງຄັ້ງທີ 20/3/2025 ວັນທີຕອບຮັບ 18/04/2025

**ບົດຄັດຫຍໍ້**

ການສຶກສາໃນຄັ້ງນີ້ມີຈຸດປະສົງເພື່ອ: 1) ປຽບທຽບຜົນການເຝິກແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າ, 2) ປຽບທຽບຄວາມສາມາດໃນການແກ້ໄຂບັນຫາກ່ອນ ແລະ ຫຼັງການຈັດການເຝິກໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າ ແລະ 3) ສຶກສາທັດສະນະຄະຕິທີ່ມີຕໍ່ການຈັດການເຝິກການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າໃນໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງ. ຮູບແບບການສຶກສາເປັນການວັດຜົນກ່ອນ ແລະ ຫຼັງການຈັດກິດຈະກຳທົດລອງ (One Group Pretest-Posttest Design). ກຸ່ມເປົ້າໝາຍທີ່ໃຊ້ໃນການວິໄຈໃນຄັ້ງນີ້ເປັນພະນັກງານຄູສອນໃນໂຮງຮຽນມັດທະຍົມສົມບູນໂພນໄຊ ສົກສຶກສາ 2022 – 2023 ຈຳນວນ 40 ຄົນ. ເຄື່ອງມືປະກອບດ້ວຍ 4 ຊຸດຄື: 1) ແຜນການສອນການໃຊ້ພາສາລາວທີ່ຖືກຕ້ອງ, 2) ແບບທົດສອບວັດຜົນການເຝິກການໃຊ້ພາສາລາວທີ່ຖືກຕ້ອງ, 3) ແບບທົດສອບວັດຄວາມສາມາດຂອງໃນການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງ ແລະ 4). ແບບສອບຖາມທັດສະນະຄະຕິທີ່ມີຕໍ່ການເຝິກການໃຊ້ພາສາລາວໃຫ້ຖືກຕ້ອງ ແລະ ສະຖິຕິທີ່ນຳໃຊ້ເຂົ້າໃນການວິເຄາະຂໍ້ມູນປະກອບມີສູດຄິດໄລ່ຊອກຫາສ່ວນຮ້ອຍ (%), ຄ່າສະເລ່ຍ ($\bar{X}$), ຄ່າຜັນປ່ຽນມາດຖານ (S.D). ຜົນການສຶກສາ ພົບວ່າ: 1) ການເຝິກແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າແມ່ນມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.00 ເປັນໄປຕາມສົມມຸດຖານທີ່ໄດ້ຕັ້ງໄວ້F 2) ຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູ ແມ່ນມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.00 ແມ່ນເປັນໄປຕາມສົມມຸດຖານທີ່ໄດ້ຕັ້ງໄວ້. ຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວຢູ່ໃນລະດັບດີຫຼາຍ ($\bar{X}$ =3.65, S.D=0.75) ແລະ 3) ທັດສະນະຄະຕິຂອງຄູທີ່ເປັນຄົນຊົນເຜົ່າທີ່ມີຕໍ່ການຈັດການເຝິກການໃຊ້ພາສາລາວໃຫ້ຖືກຕ້ອງຢູ່ໃນລະດັບດີຫຼາຍ ($\bar{X}$ = 3.89, S.D = 0.73) ຕາມລຳດັບ.

**ຄຳສຳຄັນ:** ການສອນພາສາລາວ, ຄວາມສາມາດແກ້ໄຂການໃຊ້ພາສາລາວ, ພາສາລາວໃຫ້ຖືກຕ້ອງ.

# The ability solving problem of correct Lao language by ethnic teachers at Phonxay Secondary School, Phonxay District, Luang Prabang Province Academic year 2022-2023

Khamxay CHANHTHAHONG[1], Dalavone KHAMSAVANH, Manivone VANPHAVONG, Amphan CHITTAVONG.
Khamxay CHANHTHAHONG[1] Organization and Personel Office Souphanouvong University
E-mail: khamxay@su.edu.la

**ABSTRACT**

The purposes of research were to: 1) compare the results of training to solve the problem of using the Lao language correctly, 2) compare the ability solving problems of training to use the Lao language correctly and 3) investigate attitudes towards the correct using Lao language by ethnic teachers. This study model was the measurement of before and after the experimental activities (One Group Pretest - Posttest Design). The target group consisted of 40 ethnic teachers in Phonxay Secondary School, academic year 2022-2023. The instruments used for the study comprised of 1) lesson plans on the subject of Using the correctly of Lao language. 2) Test form for training achievement. 3) Test form for the ability to solve problems using the Lao language. 4) Questionnaire attitude towards the management of training in the correct use of the Lao language and the collected data was analyzed by $\overline{X}$, S.D and percentage.

The result show that: 1) the activity of learning Lao language correctly has a statistically significant difference of 0.00 according to the established assumptions, 2) The ability to solve the problem of the correctly Lao language by the teachers there's a statistically significant difference at the 0.00 level according to the established hypothesis. The ability to solve problems in the use of Lao language is at a good level with value ($\overline{X}$=3.65, S.D = 0.75) and 3) The participants have a good attitude towards teaching problem-solving skills to use the Lao language correctly in teaching for ethnic teachers at a very good level with an average value ($\overline{X}$ =3.89, S.D=0.73) respectively.

**Keywords:** Lao language teaching, ability to Lao language, Lao language to be correctly.

**ພາກສະເໜີ**

ພາສາລາວເປັນພາສາທີ່ມີຄວາມສຳຄັນຕໍ່ກັບການດຳລົງຊີວິດຂອງຄົນໃນສັງຄົມ ເປັນເຄື່ອງມືໃນການສື່ສານ, ພົບປະສ້າງສັນແລກປ່ຽນຄວາມຄິດເຫັນລະຫວ່າງຄົນກັບຄົນໃນສັງຄົມໃດໜຶ່ງ (Sanmani, 1998)ພາສາລາວກໍມີການຂະຫຍາຍຕົວຈາກຈຳນວນຖ້ອຍຄຳຢູ່ໃນວົງແຄບແລ້ວກໍມີປະລິມານແຜ່ຂະຫຍາຍກວ້າງອອກຕື່ມ. (Holanouphab, 2005). ດັ່ງນັ້ນ, ຈຶ່ງເຫັນວ່າ ພາສາລາວມີຄວາມສຳຄັນຕໍ່ກັບຊາດລາວ ເຊິ່ງມັນໄດ້ຕິດພັນ ແລະ ສະໜິດແໜ້ນກັບການດຳລົງຊີວິດຂອງຊາວລາວມາແຕ່ມື້ກຳເນີດຈົນເຖິງປັດຈຸບັນຄືມັນໄດ້ເຂົ້າໄປແຊກຊຶມໃນປັດຊະຍາຊີວິດຂອງຄົນເຮົາເຫັນວ່າ ພາສາເປັນທັງພາຫະນະເປັນເຄື່ອງມືໂດຍທາງກົງ ແລະ ໂດຍທາງອ້ອມໃຫ້ແກ່ການສ້າງຄວາມສຳເລັດຂອງແຕ່ລະຊັ້ນຄົນ ແລະ ວິຊາຊີບຕ່າງໆ ອັນໄດ້ປະກອບສ່ວນໃຫ້ຊາດເຮົາມີຄວາມສີວິໄລຄືກັບຊາດອື່ນໆໃນໂລກ. ກໍ່ເພາະວ່າ ພາສາລາວມີພື້ນຖານທາງພາສາອັນຄົບຖ້ວນ, ມີການຂະຫຍາຍຕົວ ແລະ ມີການໃຊ້ຢ່າງປົກກະຕິໃນສັງຄົມຕະຫຼອດມາ. (Thongmeexay, 2016). ລັດຖະບານແຫ່ງ ສປປ ລາວ ຈຶ່ງໄດ້ຕົກລົງເປັນເອກກະພາບກັນໃນວັນທີ 2 ທັນວາ ປີ 1975 ໂດຍຍົກເອົາພາສາລາວເປັນພາສາທາງການ. ດັ່ງນັ້ນ, ຄົນລາວທຸກໆ ເຜົ່າຈຶ່ງຕ້ອງຮຽນຮູ້ພາສາ ແລະ ສຳນຽງສຽງເວົ້າຂອງພາສາລາວເພື່ອຕິດຕໍ່ສື່ສານ, ສ້າງຄວາມເຂົ້າໃຈລະຫວ່າງກັນເປັນສຳຄັນ. ເພາະວ່າຄົນເຮົາໃນສັງຄົມລາວແມ່ນບໍໄດ້ໃຊ້ພາສາທີ່ເປັນຕະກຸນດຽວກັນ. ດັ່ງນັ້ນ, ຈຶ່ງຈຳເປັນທີ່ຈະຕ້ອງໄດ້ຮຽນຮູ້ການນຳໃຊ້ພາສາໃຫ້ຖືກຕ້ອງ ເພື່ອສະດວກໃນການຕິດຕໍ່ສື່ສານ ແລະ ສ້າງຄວາມເຂົ້າໃຈລະຫວ່າງກັນ ແລະ ກັນ. ສະນັ້ນ, ສິ່ງສຳຄັນທີ່ຈະເປີດປະຕູສູ່ໂລກແຫ່ງການສື່ສານໄດ້ນັ້ນກໍຄືພາສາເພາະວ່າພາສາແມ່ນການສະແດງຄວາມໃນໃຈຂອງຕົນອອກມາໃຫ້ຜູ້ອື່ນຮູ້ອາດຈະເປັນອາການ, ສິ່ງຂອງ ຫຼື ລາຍລັກອັກສອນກໍໄດ້ເຊິ່ງຊ່ວຍໃຫ້ຜູ້ອື່ນຮູ້ຄວາມໝາຍ ແລະ ເຂົ້າໃຈໄດ້. "ພາສາແມ່ນການສະແດງຄວາມຮູ້ສຶກຂອງຕົນອອກມາໃຫ້ຜູ້ອື່ນເຂົ້າໃຈໄດ້ໂດຍຜ່ານການປາກເວົ້າ, ຂີດຂຽນ ແລະ ເຄື່ອງສັນຍານອື່ນໆເພື່ອເປັນການຕິດຕໍ່ສື່ສານກັນຢູ່ໃນສັງຄົມ" (Center, Lao Language 1. Use for 11+3 teacher system in year 1, 1998)ອີກຢ່າງ "ຊາດລາວເປັນຊາດໜຶ່ງທີ່ປະກອບມີຫຼາຍເຜົ່າຊົນປະກອບມີ 50 ເຜົ່າ, ອີງຕາມກົດໝາຍວ່າດ້ວຍກົດປະເພນີ ແລະ ການ ຈັດຕັ້ງປະຕິບັດກົດປະເພນີ ຢູ່ໃນ ສປປ ລາວ ກໍລະກົດ 2011 ເຊິ່ງແຕ່ລະເຜົ່າຈະມີພາສາປາກເວົ້າເປັນຂອງຕົນເອງນັ້ນເປັນເຫດໃຫ້ມີປະກົດການການໃຊ້ພາສາລາວຜິດພ້ຽນໄປຈາກຫຼັກໄວຍາກອນລາວ ແລະ ໜ່ວຍສຽງທີ່ກຳກັບມີການສະກົດຄຳຜິດການນຳໃຊ້ຄຳມີລັກສະນະຖືກໆ ຜິດໆ ຕະຫຼອດຮອດການອອກສຽງຜິດພາດຈາກໜ່ວຍສຽງຂອງອັກຂະຫຼະລາວ, ສ່ວນຫຼາຍແມ່ນຂຽນ ແລະ ອອກສຽງເປັນໄປຕາມສຳນຽງທ້ອງຖິ່ນ ແລະ ສຽງຂອງພາສາປາກເວົ້າຂອງເຜົ່າຕົນເອງ ຫຼື ອີງໃສ່ຄວາມເຄີຍຊິນຂອງກຸ່ມຄົນທີ່ເຄີຍພົວພັນ, ຄົນໃກ້ຊິດກັນທີ່ໃຊ້ໃນຊີວິດປະຈຳວັນໂດຍບໍ່ໄດ້ຄຳນຶງເຖິງຄວາມຖືກຕ້ອງທາງດ້ານສຽງ, ອັກຂະຫຼະ, ຄວາມໝາຍ ແລະ ຫຼັກໄວຍາກອນລາວ

ເຊິ່ງກາຍເປັນສາເຫດທີ່ນໍາໄປສູ່ການເຊື່ອມຂອງພາສາລາວກໍຄືພາສາແຫ່ງຊາດຂອງລາວເຮົາ” (Teacher Development Center, 2009). ເຫດຜົນທີ່ພາໃຫ້ເກີດການນໍາໃຊ້ຄໍາສັບຖືກໆຜິດໆໃນພາສາລາວ ສ່ວນຫຼາຍແມ່ນເກີດຈາກການຖືເບົາ ແລະ ແນວຄວາມຄິດທີ່ຊິນເຄີຍ ບໍ່ມີການອ້າງອີງຕາມວັດຈະນານຸກົມພາສາລາວ ແລະ ໄວຍາກອນປັດຈຸບັນ ຫາກໃຜເວົ້າ ແລະ ສະກົດບໍ່ຖືກຕາມວັດຈະນານຸກົມ ແລະ ໄວຍາກອນປັດຈຸບັນຖືວ່າຜິດ (Holanouphab, 2005).

ເພື່ອເປັນການຊອກຫາວິທີໃນການແກ້ໄຂບັນຫາທີ່ເກີດຂຶ້ນກັບພາສາລາວນັ້ນທາງພາກພັກ ແລະ ລັດຖະບານຈຶ່ງເຫັນຄວາມສໍາຄັນໄດ້ຈັດໃຫ້ມີການສ້າງຫຼັກສູດຮຽນໃນສາຂາວິຊາພາສາລາວນັບຕັ້ງແຕ່ຂັ້ນປະຖົມສຶກສາຈົນເຖິງລະດັບມະຫາວິທະຍາໄລ. ໃນນັ້ນ, ສາຂາວິຊາຄູພາລາວ - ວັນນະຄະດີ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງກໍໄດ້ເປີດສອນລາຍວິຊາພາສາລາວນັບຕັ້ງແຕ່ການປະກາດສ້າງຕັ້ງ ມະຫາວິທະຍາໄລ ສຸພານຸວົງ (Minister, 2009) ເຊິ່ງເປັນການພັດທະນາທັກສະທາງພາສາລາວໃຫ້ແກ່ນັກສຶກສາກໍຄືຄູຜູ້ສອນພາສາລາວ. ເຖິງຢ່າງນັ້ນກໍຕາມ ການທີ່ຈະເອົາຈິງເອົາຈັງກັບການແກ້ໄຂບັນຫາການໃຊ້ພາສາລາວແບບຖືກໆຜິດໆ ຍັງເປັນເລື່ອງເບົາບາງຂາດການໃຫ້ຄວາມສົນໃຈຈາກບາງກຸ່ມເຊິ່ງສະແດງອອກໃຫ້ເຫັນຄື ການຂີດຂຽນ, ປາກເວົ້າກໍໃຊ້ຕາມຄວາມເຄີຍຊິນ ແລະ ໃຊ້ຕາມສໍານຽງສຽງເວົ້າທ້ອງຖິ່ນກໍຄືສຽງເຜົ່າຂອງຕົນເອງເປັນຫຼັກ. ການໃຊ້ຄໍາທີ່ຖືກໆຜິດໆຂອງຄູອາຈານ ແລະ ນັກສຶກສາແມ່ນເກີດມາຈາກການຖືເບົາ ແລະ ມັກງ່າຍ ບໍ່ໃສ່ໃຈຕໍ່ການໃຊ້ຄໍາສັບທີ່ຖືກຕ້ອງຄິດວ່າໃຊ້ແບບໃດກໍໄດ້, ເວົ້າແບບໃດກໍມີຄົນເຂົ້າໃຈນໍາຈຶ່ງເປັນເຫດເຮັດໃຫ້ການໃຊ້ຄໍາທີ່ຖືກມີໜ້ອຍ. ສະນັ້ນ, ຖ້າຫາກເຮົາຖືເບົາຕໍ່ການໃຊ້ຄໍາສັບໂດຍບໍ່ຈໍາແນກຄໍາຜິດຄໍາຖືກຈາກບັນຫາເລັກໆນ້ອຍໆດັ່ງກ່າວຈະກໍ່ໃຫ້ເກີດເປັນບັນຫາໃຫຍ່ທັນທີ. ຈາກສະພາບສັງຄົມປັດຈຸບັນໃນການຈັດການຮຽນ - ການສອນຄວນເນັ້ນໃສ່ການພັດທະນາຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວຄຽງຄູ່ໄປກັບການພັດທະນາຜົນການຮຽນໂດຍສະເພາະແມ່ນການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງ ເຊິ່ງເປັນສິ່ງສໍາຄັນທີ່ຕ້ອງຮຽນຮູ້ຕະຫຼອດຊີວິດສໍາລັບຄູໃນສັດຕະວັດທີ 21 ເຊັ່ນ: Critical Thinking and Problem Solving (ທັກສະການຄິດຢ່າງມີວິຈາລະນະຍານ ແລະ ທັກສະການແກ້ໄຂບັນຫາ) ໂດຍການເຝິກແກ້ໄຂບັນຫາຢ່າງຫຼາກຫຼາຍ ແລະ ເປັນໄປຕາມທິດທາງທີ່ຍອມຮັບກັນທົ່ວໄປ, ໃນນັ້ນ, ການນໍາໃຊ້ວິທີສອນເຂົ້າໃນການຈັດກິດຈະກໍາການຮຽນ - ການສອນກໍເປັນປັດໃຈໜຶ່ງທີ່ສໍາຄັນຕໍ່ກັບການພັດທະນາວຽກງານການສຶກສາທີ່ພວກເຮົາທຸກຄົນຕ້ອງໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສໍາຄັນ. ໃນຍຸກປັດຈຸບັນພັກ-ລັດເຮົາໄດ້ຖືເອົາວຽກງານການສຶກສາເປັນຫຼັກໃນການພັດທະນາຊັບພະຍາກອນມະນຸດນັ້ນກໍຄືການພັດທະນາປະເທດຊາດໃຫ້ກ້າວເຂົ້າສູ່ປະເທດສັງຄົມນິຍົມທີ່ມີຄວາມເຂັ້ມແຂງໃນຮອບດ້ານ (Ministry of Education and Sports, 2015).

ໂດຍອີງຕາມການສໍາລວດຕົວຈິງໃນຄັ້ງວັນທີ 11-12 ມີນາ 2023 ກັບຄູອາຈານທີ່ສອນຢູ່ໃນໂຮງຮຽນ ມັດທະຍົມສົມບູນ ໂພນໄຊ ຈໍານວນ 40 ຄົນ ເຫັນວ່າກວມ 80% ແມ່ນຍັງອອກສຽງບໍ່ຊັດເຈນ ແລະ ບໍ່ຖືກຕ້ອງຕາມການກໍານົດສຽງຂອງພາສາລາວ. ອັນເນື່ອງມາຈາກປະກອບມີຫຼາຍເຜົ່າຊົນຢູ່ໃນກຸ່ມດຽວກັນການໃຊ້ສັບພາສາ ແລະ ການອອກສຽງແມ່ນອີງໃສ່ສໍານຽງທ້ອງຖິ່ນບວກກັບຄວາມເຄີຍຊິນທີ່ປະຕິບັດມາ. ຈຶ່ງເຮັດໃຫ້ການອອກສຽງຄໍາສັບທີ່ຜິດພ້ຽນໄປ ແລະ ບໍ່ເປັນເອກະພາບກັນ (CHANHTHAHONG, 2023).

ເມື່ອເຫັນໄດ້ເຖິງສະພາບການ ແລະ ຄວາມຈໍາເປັນຂອງການພັດທະນາບຸກຄະລາກອນໃຫ້ມີປະສິດທິພາບໃນການໃຊ້ພາສາລາວໃຫ້ຖືກຕ້ອງເໝາະສົມຕາມຫຼັກໄວຍາກອນລາວ, ຕາມໜ່ວຍສຽງສໍານຽງເວົ້າໃນວົງສາຄະນາຍາດລາວລຸ່ມ ຜູ້ວິໄຈຈຶ່ງສົນໃຈ ແລະ ເລືອກເອົາການສຶກສາຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງມາເປັນບັນຫາຂອງການວິໄຈ. ໂດຍມີຈຸດປະສົງເພື່ອປຽບທຽບຜົນການເຝິກແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າ, ປຽບທຽບຄວາມສາມາດໃນການແກ້ໄຂບັນຫາກ່ອນ ແລະ ຫຼັງການຈັດການເຝິກໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າ ແລະ ສຶກສາທັດສະນະຄະຕິທີ່ມີຕໍ່ການຈັດການເຝິກການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າໃນໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງ. ເນື່ອງຈາກວ່າຢາກປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສົ່ງເສີມພາສາແຫ່ງຊາດຂອງຕົນໄວ້ໃຫ້ຍືນຍົງຄົງຢູ່ຄູ່ກັບຊາດລາວຕະຫຼອດໄປ ແລະ ຄົນລາວທຸກເຜົ່າຊົນຈະໄດ້ໃຫ້ຄວາມສົນໃຈໃນການແກ້ໄຂບັນຫາການເວົ້າ, ການອ່ານ ແລະ ການຂຽນພາສາລາວໃຫ້ຖືກຕ້ອງຕາມຫຼັກພາສາລາວໃນຖານະເປັນພາສາທາງການຂອງ ສປປ ລາວ ຢ່າງເປັນເອກະພາບກັນ. ນອກຈາກນີ້, ຍັງເປັນປັດໄຈທີ່ສໍາຄັນໃນການສື່ເຖິງຄວາມເປັນລາວ, ສັນຍາລັກ, ເອກະລັກ ແລະ ມໍລະດົກຂອງຊາວລາວມາແຕ່ບູຮານນະການຈົນມາເຖິງປັດຈຸບັນ, ສາມາດໃຊ້ເປັນເຄື່ອງມືໃນການສື່ສານປະກອບອາຊີບ ແລະ ໃຫ້ເກີດຄວາມຈະເລີນທາງດ້ານຄວາມຄິດ, ສະຕິປັນຍາ ແລະ ພື້ນຖານໃນການຄິດ, ສໍານຶກເຖິງການພັດທະນາພາສາໃຫ້ກ້າວໜ້າຂະຫຍາຍຕົວ ຖ້າຄົນລາວຢູ່ໃນສັງຄົມຮັບຮູ້ ແລະ ເຂົ້າໃຈພາສາລາວໄດ້ດີຈະເປັນການຮອງຮັບການຂະຫຍາຍຕົວທາງດ້ານວິທະຍາສາດ ແລະ ເທັກໂນໂລຢີໄດ້ເປັນຢ່າງດີ.

**ອຸປະກອນ ແລະ ວິທີການ**

ການສຶກສາຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າໃນ ໂຮງຮຽນມັດທະຍົມ

ສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງ ຄັ້ງນີ້ເປັນການຄົ້ນຄວ້າແບບທົດລອງກັບກຸ່ມເປົ້າ ໝາຍທີ່ເປັນພະນັກງານຄູສອນທີ່ໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງ. ດັ່ງນັ້ນ, ຜູ້ຄົ້ນຄວ້າໄດ້ມີວິທີການດຳເນີນການຄົ້ນຄວ້າດັ່ງນີ້:

**ກຸ່ມເປົ້າໝາຍ**

ກຸ່ມເປົ້າໝາຍທີ່ໃຊ້ໃນການສຶກສາວິໄຈໃນຄັ້ງນີ້ເປັນພະນັກງານຄູສອນໃນໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງ ໂພນໄຊ ແຂວງຫຼວງພະບາງ ສົກສຶກສາ 2022 – 2023 ຈຳນວນ 40 ຄົນ.

**ຮູບແບບການຄົ້ນຄວ້າ**

ການສຶກສາຄັ້ງນີ້ໃຊ້ແບບແຜນການຄົ້ນຄວ້າແບບມີກຸ່ມເປົ້າໝາຍ 1 ກຸ່ມ ແລະ ມີການທົດສອບກ່ອນ ແລະ ຫຼັງການເຮັດການທົດລອງຮູບແບບ (One Group Pretest - Posttest Design) ດັ່ງນີ້:

| ທົດສອບກ່ອນ (Pretest) | ທົດລອງກັບກຸ່ມເປົ້າໝາຍ (Treatment) | ທົດສອບຫຼັງ (Posttest) |
|---|---|---|
| $O_1$ | X | $O_2$ |

❖ **ສັນຍາລັກທີ່ໃຊ້ໃນການອອກແບບການຄົ້ນຄວ້າ**

X ແທນ ທົດລອງກັບກຸ່ມເປົ້າໝາຍ (Treatment)

$O_1$ ແທນ ການທົດສອບກ່ອນ (Pretest)

$O_2$ ແທນ ການທົດສອບຫຼັງ (Posttest)

**ເຄື່ອງມືທີ່ໃຊ້ໃນການວິໄຈ**

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ປະກອບດ້ວຍເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ 4 ຊຸດ ຄື:

1. ເຄື່ອງມືຊຸດທີ 1: ແຜນການສອນການໃຊ້ພາສາລາວທີ່ຖືກຕ້ອງສຳລັບຄູດຳເນີນຕາມຂັ້ນຕອນ ຄື:

ນຳແຜນການສອນທີ່ສ້າງຂຶ້ນ ສະເໜີຜູ້ຊ່ຽວຊານວຸດທິ ເພື່ອກວດສອບຄວາມຖືກຕ້ອງເໝາະສົມ ແລະ ຄວາມສອດຄ່ອງ ໂດຍໃຊ້ວິທີການຫາຄ່າຄວາມທ່ຽງຕົງ ທາງດ້ານເນື້ອໃນ (Content Validity). ຜູ້ວິໄຈ ກຳນົດໃຫ້ຄະແນນສະເລ່ຍ 3.50 ຂຶ້ນໄປ ເປັນເກນ (Srisat, 2017) ຈຶ່ງມີຄວາມເໝາະສົມ ແລະ ມີຄຸນນະພາບທີ່ສາມາດນຳໄປໃຊ້ໄດ້ ຊຶ່ງຈາກຜົນການປະເມີນຂອງຜູ້ຊ່ຽວຊານວຸດທິ ພົບວ່າ ບົດສອນທີ່ໄດ້ສ້າງຂຶ້ນ ມີຄ່າສະເລ່ຍ 4.54 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.40 ຊຶ່ງມີຄວາມເໝາະສົມຫຼາຍທີ່ສຸດ ແລະ ສາມາດນຳໃຊ້ໄດ້.

2. ເຄື່ອງມືຊຸດທີ 2: ແບບທົດສອບວັດຜົນການເຝິກການໃຊ້ພາສາລາວທີ່ຖືກຕ້ອງຜູ້ວິໄຈໄດ້ດຳເນີນໄປຕາມຂັ້ນຕອນຂອງການສ້າງເຊັ່ນ:

ນຳແບບທົດສອບທີ່ສ້າງຂຶ້ນໄປ ຜ່ານຜູ້ຊ່ຽວຊານວຸດທິ ເພື່ອກວດຄຸນນະພາບ ໂດຍໄດ້ຄ່າດັດນີຄວາມສອດຄ່ອງລະຫວ່າງແບບທົດສອບກັບຈຸດປະສົງ (IOC) ຕັ້ງແຕ່ 0.65-1.00 ແລະ ນຳແບບທົດສອບໄປທົດລອງໂດຍໄດ້ຄ່າຄວາມຍາກ (P) ຕັ້ງແຕ່ 0.30-0.62 ແລະ ຄ່າອຳນາດຈຳແນກ (r) ຕັ້ງແຕ່ 0.21-0.46 ແລະ ຄ່າຄວາມເຊື່ອໝັ້ນ ($\alpha$) ທັງສະບັບ ເທົ່າກັບ 0.78 ຖືວ່າແບບທົດສອບດັ່ງກ່າວມີຄວາມສອດຄ່ອງກັນ ແລະ ສາມາດນຳໄປໃຊ້ໄດ້.

3. ເຄື່ອງມືຊຸດທີ 3: ແບບທົດສອບວັດຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວທີ່ຖືກຕ້ອງ ຜູ້ວິໄຈໄດ້ດຳເນີນໄປຕາມຂັ້ນຕອນຂອງການສ້າງເຊັ່ນ:

1). ສ້າງແບບທົດສອບຊະນິດເລືອກຕອບຊະນິດ 4 ຕົວເລືອກ ແລະ ແບບທົດສອບທີ່ເປັນອັດຕະໄນ ຈຳນວນ 4 ຂໍ້ ການຕອບຄຳຖາມຈາກເນື້ອໃນ ແລະ ລາຍລະອຽດຈາກລະດັບຄວາມສາມາດໃນການນຳໃຊ້ພາສາລາວ.

2). ນຳແບບທົດສອບວັດຄວາມສາມາດຂອງໃນການແກ້ໄຂບັນຫາການໃຊ້ພາສາລາວທີ່ຖືກຕ້ອງ ພ້ອມກັບແບບປະເມີນຄວາມສອດຄ່ອງໄປໃຫ້ຜູ້ຊ່ຽວຊານກວດສອບຄວາມທ່ຽງຕົງຂອງເນື້ອໃນໂດຍການ ສະແດງຄວາມຄິດເຫັນ. ຈາກນັ້ນ, ນຳເອົາຄຳຕອບຜູ້ຊ່ຽວຊານມາແປງເປັນຄ່າຄະແນນດັດສະນີຄວາມສອດຄ່ອງ (IOC) ຄ່າດັດສະນີຄວາມສອດຄ່ອງເທົ່າກັບ 0.5 ຖືວ່າແບບທົດສອບດັ່ງກ່າວມີຄວາມສອດຄ່ອງກັນ ແລະ ສາມາດນຳໄປໃຊ້ໄດ້.

4. ເຄື່ອງມືຊຸດທີ 4: ແບບສອບຖາມທັດສະນະຄະຕິທີ່ມີຕໍ່ການຈັດການເຝິກການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າ ຜູ້ວິໄຈໄດ້ດຳເນີນການສ້າງ ແລະ ຫາຄຸນນະພາບດັ່ງນີ້:

1). ສ້າງແບບສອບຖາມເປັນມາດຕາສ່ວນປະມານຄ່າ 5 ລະດັບໂດຍມີເກນການໃຫ້ຄະແນນໃນການວິເຄາະຂໍ້ມູນ.

2). ນຳເອົາແບບສອບຖາມທັດສະນະຄະຕິທີ່ມີຕໍ່ການເຝິກການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າທີ່ສ້າງຂຶ້ນພ້ອມແບບປະເມີນຄວາມເໝາະສົມໄປໃຫ້ຜູ້ຊ່ຽວຊານຈຳນວນ 3 ທ່ານເພື່ອກວດສອບຄວາມສອດຄ່ອງ ດ້ານເນື້ອໃນ ແລະ ພາສາທີ່ໃຊ້ ຄະແນນສາມາດແປຄວາມໝາຍໂດຍໃຊ້ເກນຄ່າຄະແນນສະເລ່ຍ ເຊັ່ນ: ພິຈາລະນາຈາກຄ່າສະເລ່ຍຄວາມຄິດເຫັນຂອງຜູ້ຊ່ຽວຊານຕັ້ງແຕ່ 3.41 ຂຶ້ນໄປ, ຄ່າຄວາມສອດຄ່ອງຕັ້ງແຕ່ 0.60-1.00 ແລະ ນຳໄປທົດລອງທີ່ບໍ່ແມ່ນກຸ່ມຕົວຢ່າງ ຄ່າ ຄວາມເຊື່ອໝັ້ນ ($\alpha$) ຂອງແບບສອບຖາມ ໂດຍໃຊ້ວິທີຂອງຄຣອນບາກ (Srisat, 2017) ເທົ່າກັບ 0.70 ຖືວ່າແບບປະເມີນທັດສະນະຄະຕິທີ່ມີຕໍ່ການຈັດການເຝິກການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າທີ່ສ້າງຂຶ້ນມີຄຸນນະພາບເໝາະສົມ.

**ການເກັບກຳຮວບຮວມຂໍ້ມູນ**

ການເກັບກຳ ແລະ ຮວບຮວມຂໍ້ມູນສຳລັບການວິໄຈຄັ້ງນີ້ໄດ້ດຳເນີນຕາມຂັ້ນຕອນ ດັ່ງນີ້:

1). ສຶກສາຮວບຮວມແນວຄິດ ແລະ ການພັດທະນາການສອນ, ທິດສະດີການຮຽນຮູ້, ພາສາ. ຮວບຮວມຂໍ້ມູນຈາກການປະເມີນຄວາມສອດຄ່ອງຂອງການສຶກສາຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງ ຄູທີ່ເປັນຄົນຊົນເຜົ່າທີ່ໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງ ສົກສຶກສາ 2022 – 2023 ຈາກຜູ້ຊ່ຽວຊານເພື່ອນຳໄປປັບປຸງແກ້ໄຂ ແລະ ນຳໄປທົດລອງເຝິກອົບຮົມກັບຄູສອນພາສາລາວຕໍ່ໄປ.

2). ຮວບຮວມຂໍ້ມູນຈາກການປະເມີນຄວາມເໝາະສົມຂອງຫຼັກສູດຈາກຜູ້ຊ່ຽວຊານເພື່ອນຳໄປປັບປຸງແກ້ໄຂ ແລະ ນຳໄປທົດລອງເຝິກອົບຮົມກັບຄູສອນພາສາລາວຕໍ່ໄປ.

3). ຮວບຮວມຂໍ້ມູນຈາກການປະເມີນແບບສອບຖາມທັດສະນະຄະຕິທີ່ມີຕໍ່ການຈັດການເຝິກການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າ ຈາກຜູ້ຊ່ຽວຊານເພື່ອນຳໄປປັບປຸງແກ້ໄຂ ແລະ ນຳໄປທົດລອງເຝິກອົບຮົມກັບຄູສອນພາສາລາວຕໍ່ໄປ.

**ການວິເຄາະຂໍ້ມູນ**

1. ວິເຄາະຂໍ້ມູນການປຽບທຽບຜົນການເຝິກແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າ, ທີ່ໄດ້ຈາກການຈັດເຝິກການໃຊ້ພາສາລາວໃຫ້ຖືກຕ້ອງ ຈາກແບບທົດສອບວັດຜົນກ່ອນ ແລະ ຫຼັງການຈັດການເຝິກການໃຊ້ພາສາລາວໃຫ້ຖືກຕ້ອງ ໂດຍການຫາຄ່າສະເລ່ຍ ແລະ ຄ່າຂອງສ່ວນບ່ຽງເບນມາດຕະຖານ ແລະ ໃຊ້ສະຖິຕິທົດສອບຄ່າ t ແບບບໍ່ເປັນອິດສະຫຼະຕໍ່ກັນ (t-test dependent).

2. ວິເຄາະຂໍ້ມູນການປຽບທຽບຄວາມສາມາດໃນການແກ້ໄຂບັນຫາກ່ອນ ແລະ ຫຼັງການຈັດການເຝິກໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າ ຈາກແບບທົດສອບວັດຄວາມສາມາດໃນການແກ້ບັນຫາ 4 ດ້ານຕາມແບບ Heuristics (ເຊັ່ນ: 1). ດ້ານການກຳນົດບັນຫາ, 2). ການວິເຄາະສາເຫດຂອງບັນຫາ. 3). ການແກ້ບັນຫາ ແລະ 4). ການກວດສອບຜົນການແກ້ບັນຫາໂດຍການຫາຄ່າສະເລ່ຍ ແລະ ຄ່າຂອງສ່ວນບ່ຽງເບນມາດຕະຖານ ແລະ ໃຊ້ສະຖິຕິທົດສອບຄ່າ t ແບບບໍ່ເປັນອິດສະຫຼະຕໍ່ກັນ (t-test dependent).

3. ວິເຄາະຂໍ້ມູນການສຶກສາທັດສະນະຄະຕິທີ່ມີຕໍ່ການຈັດການເຝິກການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າໂດຍການນຳເອົາຄະແນນທີ່ໄດ້ຮັບຈາກການຕອບແບບສອບຖາມແປຄວາມໝາຍຕາມເກນຄ່າສະເລ່ຍທີ່ໄດ້ກຳນົດໄວ້.

**ຜົນການສຶກສາ**

**1 ວິເຄາະປຽບທຽບຜົນການເຝິກແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າທີ່ໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງ**

ພົບວ່າ ຜົນການເຝິກແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າທີ່ໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງ ແມ່ນມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.00 ໂດຍມີຄ່າສະເລ່ຍຜົນຫຼັງການຈັດກິດຈະກຳ ($\overline{X}$ =14.53, S.D=2.16), ສູງກວ່າຜົນກ່ອນການຈັດກິດຈະກຳ ($\overline{X}$ =12.43, S.D=2.85).

ດັ່ງນັ້ນ, ສະຫຼຸບໄດ້ວ່າ ຜົນຫຼັງຈາກການເຝິກແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າທີ່ໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງມີຄວາມແຕກຕ່າງກັບຜົນກ່ອນການເຝິກ ດ້ວຍລະດັບຄວາມເຊື່ອໝັ້ນ 95% ແມ່ນເປັນໄປຕາມສົມມຸດຖານທີ່ໄດ້ຕັ້ງໄວ້.

**2. ວິເຄາະປຽບທຽບຄະແນນຄວາມສາມາດໃນການແກ້ໄຂບັນຫາກ່ອນ ແລະ ຫຼັງການຈັດການເຝິກໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າທີ່ ໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງ**

2.1. ປຽບທຽບຄະແນນຄວາມສາມາດໃນການແກ້ໄຂບັນຫາກ່ອນ ແລະ ຫຼັງການຈັດການເຝິກໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າ

ຈາກຜົນການສຶກສາພົບວ່າ ຄະແນນຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າທີ່ໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງ ແມ່ນມີຄວາມແຕກຕ່າງ ກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.00 ໂດຍມີຄະແນນສະເລ່ຍຄວາມສາມາດໃນການແກ້ໄຂບັນຫາຫຼັງເຝິກ ($\overline{X}$ =15.85, S.D=2.13), ສູງກວ່າຜົນກ່ອນເຝິກ ($\overline{X}$ =12.60, S.D=2.44).

ດັ່ງນັ້ນ, ຈຶ່ງສະຫຼຸບໄດ້ວ່າ ຜົນຄະແນນຄວາມສາມາດໃນການແກ້ໄຂບັນຫາຂອງຄູທີ່ເປັນຄົນຊົນເຜົ່າທີ່ໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງ ຫຼັງເຝິກ ມີຄວາມແຕກຕ່າງກັບຜົນຄະແນນກ່ອນການເຝິກ ດ້ວຍລະດັບຄວາມເຊື່ອໝັ້ນ 95% ແມ່ນເປັນໄປຕາມສົມມຸດຖານທີ່ໄດ້ຕັ້ງໄວ້.

2.2. ຜົນຄວາມສາມາດໃນການແກ້ໄຂບັນຫາແຕ່ລະດ້ານ

ຈາກຜົນການສຶກສາພົບວ່າ: ຜູ້ເຂົ້າຮ່ວມກິດຈະກຳມີຜົນຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຢູ່ໃນລະດັບ ດີຫຼາຍ ໂດຍມີຄ່າ ($\overline{X}$ =3.65, S.D=0.75), ເມື່ອພິຈາລະນາແຕ່ລະດ້ານແລ້ວເຫັນວ່າ: ຜູ້ເຂົ້າຮ່ວມກິດຈະກຳມີຜົນຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງ ດ້ານການກວດສອບການແກ້ບັນຫາຢູ່ໃນລະດັບ ດີຫຼາຍມີຄ່າ ($\overline{X}$ =3.98, S.D=0.73), ຮອງລົງມາແມ່ນດ້ານການກຳນົດບັນຫາມີຄ່າເທົ່າກັບ ($\overline{X}$ =3.73, S.D=0.68), ດ້ານ ການແກ້ໄຂບັນຫາມີຄ່າ ($\overline{X}$ =3.48, S.D=0.75), ແລະ ດ້ານການວິເຄາະສາເຫດຂອງບັນຫາມີຄ່າເທົ່າກັບ ($\overline{X}$ =3.43, S.D=0.71), ຕາມລຳດັບ. ເຫັນວ່າຜູ້ເຂົ້າຮ່ວມກິດຈະກຳມີຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງແມ່ນຢູ່ໃນລະດັບດີຫຼາຍ ເຊິ່ງ

ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ເນື່ອງຈາກວ່າ, ໄດ້ຮຽນຮູ້ຈຸດດີ ຈຸດອ່ອນ ແລະ ເທັກນິກການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງທີ່ວິທະຍາກອນໄດ້ນຳສະເໜີເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້. ພ້ອມນັ້ນເທັກນິກດັ່ງກ່າວແມ່ນມີຄວາມສຳຄັນ ແລະ ຈຳເປັນທີ່ສຸດຕໍ່ຜູ້ທີ່ໃຊ້ພາສາລາວເລົ້າລວມ ເວົ້າສະເພາະກໍແມ່ນຄູຜູ້ສອນໃນໂຮງຮຽນມັດທະຍົມສົມບູນເມືອງໂພນໄຊ ແຂວງຫຼວງພະບາງ.

**3.3 ຜົນສຶກສາທັດສະນະຄະຕິທີ່ມີຕໍ່ການຈັດການເຝິກການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າທີ່ໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງ**

ເຫັນວ່າ ຜູ້ເຂົ້າຮ່ວມມີທັດສະນະທີ່ດີຕໍ່ກັບການສອນທັກສະການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງເຂົ້າໃນການສອນສຳລັບຄູທີ່ເປັນຄົນຊົນເຜົ່າ ທີ່ ໂຮງຮຽນ ມັດທະຍົມສົມບູນໂພນໄຊ ເມືອງ ໂພນໄຊ ແຂວງຫຼວງພະບາງ ສົກສຶກສາ 2022 - 2023 ຢູ່ໃນລະດັບຫຼາຍ ໂດຍມີຄ່າສະເລ່ຍເທົ່າກັບ ($\bar{X}$=3.89, S.D=0.73). ເມື່ອພິຈາລະນາເປັນດ້ານເຫັນວ່າ: ຜູ້ເຂົ້າຮ່ວມມີທັດສະນະໃນລະດັບຫຼາຍທີ່ສຸດຕໍ່ດ້ານ ວິທີການນຳສະເໜີ ໂດຍມີຄ່າສະເລ່ຍເທົ່າກັບ ($\bar{X}$=3.96, S.D= 0.73), ຮອງລົງມາ ຜູ້ເຂົ້າຮ່ວມມີທັດສະນະທີ່ດີຕໍ່ກັບການສອນທັກສະການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງເຂົ້າໃນການສອນສຳລັບພະນັກງານທີ່ເປັນຄົນຊົນເຜົ່າໃນລະດັບຫຼາຍ ແມ່ນດ້ານກິດຈະກຳການຮຽນ - ການສອນ, ດ້ານເນື້ອໃນບົດຮຽນ, ດ້ານການນຳໄປໃຊ້, ດ້ານສະພາບແວດລ້ອມ ແລະ ດ້ານການວັດ ແລະ ປະເມີນຜົນ ໂດຍມີຄ່າສະເລ່ຍເທົ່າກັບ ($\bar{X}$=3.94, S.D= 0.73), ($\bar{X}$=3.93, S.D= 0.73), ($\bar{X}$=3.89, S.D= 0.70), ($\bar{X}$=3.85, S.D= 0.72), ($\bar{X}$=3.80, S.D= 0.73) ຕາມລຳດັບ.

ດັ່ງນັ້ນ, ຈຶ່ງສະຫຼຸບໄດ້ວ່າຜູ້ເຂົ້າຮ່ວມມີຄວາມຕ້ອງການໃນການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງທີ່ສຸດເນື່ອງຈາກການໃຊ້ພາສາລາວຂອງເຂົາເຈົ້າແມ່ນຍັງບໍ່ທັນຖືກຕ້ອງເໝາະສົມພໍ. ດັ່ງນັ້ນ, ຈຶ່ງມີທັດສະນະທີ່ດີຕໍ່ກັບການສອນທັກສະການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງເຂົ້າໃນການສອນສຳລັບພະນັກງານທີ່ເປັນຄົນຊົນເຜົ່າ ທີ່ໂຮງຮຽນ ມັດທະຍົມສົມບູນໂພນໄຊ ເມືອງ ໂພນໄຊ ແຂວງຫຼວງພະບາງ ຢູ່ໃນລະດັບຫຼາຍ, ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້.

**ວິພາກຜົນ**

1. ຜົນກ່ອນ ແລະ ຫຼັງການຈັດກິດຈະກຳເຝິກແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າທີ່ໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງມີຄວາມແຕກຕ່າງກັນເນື່ອງຈາກ ການເຝິກແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູຜູ້ວິໄຈນຳໃຊ້ຂະບວນການຈັດການເຝິກຕາມຂັ້ນຕອນທີ່ເໝາະສົມຕາມສະພາບຄວາມເປັນຈິງຂອງພື້ນທີ່ເຊິ່ງໄດ້ເລີ່ມຈາກການສ້າງຄວາມສຳພັນ, ຂັ້ນການສ້າງຄຳຖາມທີ່ເປັນບັນຫາ, ຂັ້ນຄົ້ນຫາການແກ້ໄຂ ແລະ ຂັ້ນການປະເມີນຜົນ. ເຊິ່ງສາມາດເລີ່ມໄດ້ຕົ້ນດ້ວຍຂັ້ນໃດກ່ອນກໍໄດ້ຂຶ້ນກັບເນື້ອໃນ ແລະ ສະພາບຄວາມເປັນຈິງຂອງສະຖານະການໃນການເຝິກແຕ່ລະຄັ້ງ. ເນື້ອໃນທີ່ເຂົ້າໃນການເຝິກແກ້ໄຂບັນຫານີ້ຜູ້ວິໄຈໄດ້ໃຊ້ເລື່ອງ ການສະກົດຄຳ, ການອອກສຽງໃນພາສາລາວ, ອັກຂະຫຼະວິທະຍາ, ແລະ ຫຼັກໄວຍາກອນລາວ ຈຶ່ງມີຄວາມເໝາະສົມກັບສະຖານະການຈິງໃນສັງຄົມ, ສົ່ງເສີມໃຫ້ຜູ້ເຂົ້າຮ່ວມກິດຈະກຳມີການໃຊ້ພາສາລາວໄດ້ດີຂຶ້ນເພາະຜູ້ເຂົ້າຮ່ວມໄດ້ຕັ້ງຄຳຖາມ, ຄົ້ນຄວ້າຫາຄຳຕອບ ແລະ ປະເມີນການກ້ໄຂບັນຫາຢູ່ເລື້ອຍໆ. ສອດຄ່ອງກັບທິດສະດີການຮຽນໂດຍການຄົ້ນພົບຂອງ (Bruner, 1973) ອ້າງໃນ (Kotakoon., 2013)ທີ່ເຊື່ອວ່າການຮັບຮູ້ຂອງມະນຸດຂຶ້ນຢູ່ກັບຄວາມສົນໃຈຂອງຜູ້ຮຽນຕໍ່ສິ່ງນັ້ນໆ ເພາະວ່າຜູ້ຮຽນຈະໃຊ້ຄວາມຢາກຮູ້ຢາກເຫັນໃນການປະຕິສຳພັນກັບສິ່ງແວດລ້ອມຈົນເກີດການຮຽນຮູ້ ແລະ ສອດຄ່ອງກັບຜົນງານວິໄຈ (CHANHTHAHONG, 2023). ສຶກສາການພັດທະນາການໃຊ້ພາສາລາວເພື່ອການສື່ສານສຳລັບຄູທີ່ເປັນຄົນຊົນເຜົ່າທີ່ ໂຮງຮຽນມັດທະຍົມສົມບູນໂພນທອງ ເມືອງໂພນທອງ ແຂວງຫຼວງພະບາງ ຜົນການວິໄຈພົບວ່າ: ການຈັດກິດຈະກຳການສອນການໃຊ້ພາສາລາວເພື່ອການສື່ສານແມ່ນມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.00 ໂດຍມີຄ່າສະເລ່ຍຜົນການຮຽນຫຼັງການຈັດກິດຈະກຳ ($\bar{X}$=12.83, S.D= 2.33), ສູງກວ່າຜົນກ່ອນການຈັດກິດຈະກຳ ($\bar{X}$=15.91, S.D= 1.96), ເນື່ອງຈາກວ່າ ຂະບວນການພັດທະນາການສອນການນຳໃຊ້ພາສາລາວເພື່ອການສື່ສານມີຂັ້ນຕອນຢ່າງລະອຽດຕາມລຳດັບຂອງການພັດທະນາຄວາມຮູ້ ຄວາມສາມາດຂອງຜູ້ເຂົ້າຮ່ວມກິດຈະກຳ ແລະ ໄດ້ສົ່ງເສີມຂະບວນການໃຊ້ທັກສະຕ່າງໆ ເຊັ່ນ: ດ້ານຄວາມຮູ້, ດ້ານການປະຕິບັດ, ດ້ານເຈຕະຄະຕິຈາກການຮຽນຮູ້ ແລະ ໄດ້ລົງມືປະຕິບັດຂອງຜູ້ເຂົ້າຮ່ວມຈຶ່ງເຮັດໃຫ້ຜູ້ເຂົ້າຮ່ວມກິດຈະກຳເກີດການຮັບຮູ້ທີ່ຄົງທົນ, ມີຄວາມສຸກ ແລະ ມີຄວາມກະຕືລືລົ້ນໃຫ້ຄວາມສົນໃຈໃນການນຳໃຊ້ພາສາລາວ, ເກີດປະສົບການການນຳໃຊ້, ເກີດການແລກປ່ຽນປະສົບການໃນການນຳໃຊ້ພາສາລາວເພື່ອການສື່ສານໃຫ້ຖືກຕ້ອງດ້ວຍການເຮັດກິດຈະກຳຮ່ວມກັນ ຈຶ່ງສາມາດສົ່ງຜົນໃຫ້ຜູ້ເຂົ້າຮ່ວມກິດຈະກຳມີຜົນທາງການພັດທະນາການໃຊ້ພາສາລາວເພື່ອການສື່ສານສຳລັບຄູ ມີຜົນໄປຕາມສົມມຸດຖານທີ່ຕັ້ງໄວ້. ຈາກຄົ້ນຄວ້າດັ່ງກ່າວມາເຫັນໄດ້ວ່າ: ສຶກສາຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າໂຮງຮຽນມັດທະຍົມສົມບູນໂພນໄຊ ສາມາດຊ່ວຍສົ່ງເສີມໃຫ້ຄູສອນມີຜົນການນຳໃຊ້ພາສາລາວດີຂຶ້ນພ້ອມນັ້ນຍັງສົ່ງຜົນເຮັດໃຫ້ການນຳໃຊ້ພາສາລາວມີຄວາມຖືກຕ້ອງຊັດເຈນດີຂຶ້ນກວ່າເກົ່າ.

2. ຄວາມສາມາດໃນການແກ້ໄຂບັນຫາກ່ອນ ແລະ ຫຼັງການຈັດການເຝິກໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າທີ່

ໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງ.

1) ຜົນຫຼັງການຈັດກິດຈະກຳເຝິກຄວາມສາມາດໃນການແກ້ໄຂບັນຫາແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າທີ່ໂຮງຮຽນມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງ ມີຄວາມແຕກຕ່າງກັບຜົນກ່ອນການຈັດກິດຈະກຳ ດ້ວຍລະດັບຄວາມເຊື່ອໝັ້ນ 95% ເນື່ອງຈາກວ່າ, ຜູ້ວິໄຈໄດ້ນຳເອົາວິທີການທີ່ຈະຊ່ວຍແກ້ໄຂບັນຫາການໃຊ້ພາສາລາວທີ່ສອດຄ່ອງກັບລະດັບການຮັບຮູ້ ແລະ ເຂົ້າໃຈຂອງຜູ້ເຂົ້າຮ່ວມກິດຈະກຳ ເຮັດໃຫ້ເຂົາເຈົ້າເຂົ້າໃຈເຖິງຮູບແບບ ແລະ ວິທີການໄດ້ຢ່າງຊັດເຈນ ແລະ ເປັນວິທີທີ່ມີປະໂຫຍດໃນການຄິດສິ່ງໃໝ່ໆໄດ້ເຝິກການຄິດສ້າງສັນຢ່າງສົມເຫດສົມຜົນ, ການພັດທະນາການຄິດທີ່ກວ້າງຂວາງສາມາດຫາແນວທາງການແກ້ໄຂບັນຫາຢ່າງຫຼາກຫຼາຍ, ຄວາມສາມາດໃນການຄິດນັ້ນຂຶ້ນຢູ່ກັບຄວາມສາມາດ, ຄວາມຮູ້, ສະຕິປັນຍາ, ປະສົບການຂອງຜູ້ເຂົ້າຮ່ວມ ຈຶ່ງເຮັດໃຫ້ຜູ້ເຂົ້າຮ່ວມກິດຈະກຳມີຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວໄດ້ດີ. ສອດຄ່ອງກັບຜົນງານການວິໄຈຂອງ (Wacharaporn, 2017) ໄດ້ສຶກສາກ່ຽວກັບ ການສຶກສາຜົນສຳເລັດການຮຽນຮູ້ ແລະ ແກ້ໄຂບັນຫາຄວາມສາມາດຂອງນັກຮຽນຊັ້ນ ມ 4 ສອນໂດຍຂະບວນການຄິດ Heuristics ຜົນການວິໄຈພົບວ່າ: ຄວາມສາມາດໃນການແກ້ບັນຫາຂອງນັກຮຽນຊັ້ນມ 4 ຫຼັງການຈັດການຮຽນຮູ້ດ້ວຍຂະບວນການຄິດແບບ Heuristics ມີຄະແນນສະເລ່ຍຫຼັງຮຽນ ($\bar{X}$ =41.02, S.D= 0.69) ສູງກວ່າຄະແນນສະເລ່ຍກ່ອນຮຽນ ($\bar{X}$ =22.31, S.D= 0.81) ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

2) ຜົນຄວາມສາມາດໃນການແກ້ໄຂບັນຫາແຕ່ລະດ້ານ: ຜູ້ເຂົ້າຮ່ວມກິດຈະກຳມີຜົນຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຢູ່ໃນລະດັບ ດີຫຼາຍ ເນື່ອງຈາກວ່າ ໄດ້ຮຽນຮູ້ຈຸດດີຈຸດອ່ອນ ແລະ ເທັກນິກການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງທີ່ວິທະຍາກອນໄດ້ນຳສະເໜີເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້. ພ້ອມນັ້ນ, ເທັກນິກດັ່ງກ່າວແມ່ນມີຄວາມສຳຄັນ ແລະ ຈຳເປັນທີ່ສຸດຕໍ່ຜູ້ທີ່ໃຊ້ພາສາລາວເອົ້ລວມ ເວົ້າສະເພາະກໍແມ່ນຄູຜູ້ສອນໃນໂຮງຮຽນມັດທະຍົມສົມບູນເມືອງໂພນໄຊ ແຂວງຫຼວງພະບາງ. ສອດຄ່ອງກັບຜົນງານການວິໄຈຂອງ (Wacharaporn, 2017) ໄດ້ສຶກສາກ່ຽວກັບ ການສຶກສາຜົນສຳເລັດການຮຽນຮູ້ ແລະ ແກ້ໄຂບັນຫາຄວາມສາມາດຂອງນັກຮຽນຊັ້ນ ມ4 ສອນໂດຍຂະບວນການຄິດ Heuristics. ຜົນການວິໄຈພົບວ່າ: ຄວາມສາມາດໃນການແກ້ບັນຫາທີ່ການຮຽນດ້ວຍຂະບວນການຄິດແບບ Heuristics ຂອງນັກຮຽນສູງກວ່າກ່ອນຮຽນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ເມື່ອພິຈາລະນາຄວາມສາມາດໃນການແກ້ບັນຫາໃນແຕ່ລະດ້ານຫຼັງຈາກການການຮຽນດ້ວຍຂະບວນການຄິດແບບ Heuristics ພົບວ່າ: ຄວາມສາມາດໃນການແກ້ບັນຫາຈະສາມາດລຽງລຳດັບຈາກຫຼາຍໄປຫາໜ້ອຍໄດ້ດັ່ງນີ້: ດ້ານການກຳນົດບັນຫາ ($\bar{X}$ =2.88, S.D= 0.21), ການວິເຄາະສາເຫດຂອງບັນຫາ($\bar{X}$ =2.65, S.D= 0.22), ການແກ້ບັນຫາ($\bar{X}$ =2.44, S.D= 0.13), ແລະ ການກວດສອບຜົນການແກ້ບັນຫາ ($\bar{X}$ =2.20, S.D= 0.23) ຕາມລຳດັບ ແລະ ຍັງສອດຄ່ອງກັບຜົນງານການວິໄຈຂອງ (Petcharat, 2560) ໄດ້ສຶກສາກ່ຽວກັບ The Ability in Thai Usage of the Bachelor's Degree Students Rajamangala University of Technology Thanyabur ຜົນການວິໄຈພົບວ່າ: 1. ຄວາມສາດໃນການໃຊ້ພາສາໄທຂອງນັກສຶກສາລະດັບປະລິນຍາຕີ ມະຫາວິທະຍາໄລເທັກໂນໂລຊີ ຣາຊມົງຄົນທັນຍະບູລີ ສ່ວນໃຫຍ່ຢູ່ໃນລະດັບປານກາງ. 2. ຄວາມສາມາດໃນການໃຊ້ພາສາໄທຂອງນັກສຶກສາລະດັບປະລິນຍາຕີ ມະຫາວິທະຍາໄລເທັກໂນໂລຊີ ຣາຊມົງຄົນທັນຍະບູລີ ລຽງລຳດັບ ຈາກລະດັບດີຫຼາຍໄປຫາລະດັບຕ່ຳ ຄື: ຄວາມສາມາດດ້ານການອ່ານ, ດ້ານການຟັງ, ດ້ານການຂຽນ, ແລະ ດ້ານການເວົ້າ. ຈາກຜົນການຄົ້ນຄວ້າເຫັນວ່າ ຄວາມສາມາດໃນການນຳໃຊ້ພາສາລາວແມ່ນມີຄວາມສຳຄັນ ແລະ ຈຳເປັນຕໍ່ກັບການພັດທະນະທັກສະການໃຊ້ພາສາລາວຂອງຄົນລາວກໍຄືຄົນຕ່າງປະເທດທີ່ໃຊ້ພາສາລາວຢ່າງສ້າງສັນ ແລະ ມີວິທີແກ້ໄຂບັນຫາທີ່ເກີດຂຶ້ນກັບພາສາລາວໄດ້ດີຂຶ້ນໄປ.

3. ຜູ້ເຂົ້າຮ່ວມມີທັດສະນະທີ່ດີຕໍ່ກັບການສອນທັກສະການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງເຂົ້າໃນການສອນສຳລັບພະນັກງານທີ່ເປັນຄົນຊົນເຜົ່າ ທີ່ ໂຮງຮຽນ ມັດທະຍົມສົມບູນໂພນໄຊ ເມືອງໂພນໄຊ ແຂວງຫຼວງພະບາງ ສົກສຶກສາ 2022 - 2023 ຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ: ການຈັດການເຝິກການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າທີ່ໂຮງຮຽນມັດທະຍົມສົມບູນໂພນໄຊ ເປັນຊອກຫາວິທີທາງຊ່ວຍໃຫ້ຄູໄດ້ມີການພັດທະນາທັກສະທາງພາສາ ແລະ ເປັນຮູບແບບທີ່ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມໃນປັດຈຸບັນ. ເຊິ່ງສອດຄ່ອງກັບຜົນງານການວິໄຈຂອງ (INVANKHAM, 2023), ສຶກສາພຶດຕິກຳ ແລະ ການມີສ່ວນຮ່ວມໃນການຈັດກິດຈະກຳການພັດທະນາການໃຊ້ພາສາລາວເພື່ອການສື່ສານສຳລັບຄູທີ່ ມສ ເມືອງໂພນທອງ ແຂວງຫຼວງພະບາງສົກສຶກສາ 2019-2020 ຜົນການສຶກສາພົບວ່າ: ຜູ້ເຂົ້າຮ່ວມກິດຈະກຳມີພຶດຕິກຳທີ່ດີຕໍ່ກັບການຈັດກິດຈະກຳການພັດທະນາການສອນການໃຊ້ພາສາລາວເພື່ອການສື່ສານ ຂອງຄູທີ່ໂຮງຮຽນມັດທະຍົມສົມບູນເມືອງໂພນທອງ ແຂວງຫຼວງພະບາງ ຢູ່ໃນລະດັບຫຼາຍ ໂດຍມີຄ່າສະເລ່ຍເທົ່າກັບ ($\bar{X}$ =4.47, S.D=0.54). ເມື່ອພິຈາລະນາເປັນດ້ານເຫັນວ່າ: ຜູ້ເຂົ້າຮ່ວມກິດຈະກຳມີພຶດຕິກຳທີ່ດີໃນລະດັບຫຼາຍທີ່ສຸດຕໍ່ດ້ານພຶດຕິກຳການເຂົ້າຮ່ວມກິດຈະກຳໂດຍມີຄ່າສະເລ່ຍເທົ່າກັບ ($\bar{X}$ = 4.54, S.D= 0.53), ຮອງລົງມາຜູ້ເຂົ້າຮ່ວມກິດຈະກຳມີພຶດຕິກຳທີ່ດີໃນລະດັບຫຼາຍທີ່ສຸດແມ່ນ ດ້ານແຮງບັນດານໃຈໃນການເຂົ້າຮ່ວມກິດຈະກຳ ໂດຍມີຄ່າສະເລ່ຍເທົ່າກັບ

($\bar{X}$ = 4.51, S.D= 0.50), ຮອງລົງມາຜູ້ເຂົ້າຮ່ວມກິດຈະກຳມີພຶດຕິກຳທີ່ດີໃນລະດັບຫຼາຍ ຕໍ່ກັບ ດ້ານລະດັບຄວາມຮັບຜິດຊອບ, ດ້ານພຶດຕິກຳທີ່ດີຕໍ່ການມີສ່ວນຮ່ວມໃນງານກິດຈະກຳ, ດ້ານພຶດຕິກຳທີ່ດີຕໍ່ການເຂົ້າຮ່ວມກິດຈະກຳໂດຍມີຄ່າສະເລ່ຍເທົ່າກັບ (($\bar{X}$ = 4.47, S.D= 0.54), ($\bar{X}$ = 4.43, S.D= 0.57), ($\bar{X}$ = 4.39, S.D= 0.56)) ຕາມລຳດັບ. ແລະ ຍັງສອດຄ່ອງກັບຜົນງານການວິໄຈຂອງ (Yapha, 1998), ສຶກສາທັດສະນະຄະຕິຕໍ່ຄວາມສຳຄັນຂອງພາສາມະລາຍູໃນປະຊາຄົມອາຊຽນ ແລະ ແນວທາງການພັດທະນາການສອນພາສາມະລາຍູຂອງນັກສຶກສາມະຫາວິທະຍາໄລ ລາດຊະພັດຍະລາ. ຜົນການວິໄຈພົບວ່າ: ນັກສຶກສາ ມະຫາວິທະຍາໄລ ລາດຊະພັດຍະລາມີທັດສະນະຄະຕິຕໍ່ຄວາມສຳຄັນຂອງພາສາມະລາຍູໃນປະຊາຄົມອາຊຽນ ໂດຍລວມໃນລະດັບຫຼາຍທັງ 3 ດ້ານ ໄດ້ແກ່ທັດສະນະຄະຕິດ້ານຄວາມຮູ້, ຄວາມຄິດ ແລະ ພຶດຕິກຳ. ສະແດງໃຫ້ເຫັນວ່ານັກສຶກສາມີທັດສະນະໃນທາງບວກຕໍ່ຄວາມສຳຄັນຂອງພາສາມະລາຍູໃນປະຊາຄົມອາຊຽນ.

## ສະຫຼຸບ

ຈາກການສຶກສາວິໄຈທີ່ກ່ຽວກັບ ຄວາມສາມາດໃນການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າ ໂຮງຮຽນມັດທະຍົມສົມບູນໂພນໄຊ ສະຫຼຸບໄດ້ວ່າ ການຈັດກິດຈະກຳການແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າ ໂຮງຮຽນມັດທະຍົມສົມບູນໂພນໄຊ ເປັນການຈັດກິດຈະກຳທີ່ເຮັດໃຫ້ຜູ້ເຂົ້າຮ່ວມເປັນສ່ວນໜຶ່ງໃນການແກ້ໄຂບັນຫາຂອງການໃຊ້ພາສາລາວແບບຖືກໆຜິດໆ ໃຫ້ຖືກຕ້ອງຕາມຫຼັກການທາງໄວຍາກອນ, ຫຼັກການອອກສຽງຂອງພາສາລາວ ແລະ ເປັນຜູ້ທີ່ມີຄວາມພ້ອມໃນເລື່ອງການຮຽນຮູ້ ແລະ ເຂົ້າໃຈໃນການໃຊ້ພາສາລາວທີ່ຖືກຕ້ອງຕາມຫຼັກການທາງພາສາຫຼາຍທີ່ສຸດ ເຊິ່ງສິ່ງຜົນໃຫ້ຜູ້ເຂົ້າຮ່ວມມີຜົນຂອງການນຳໃຊ້ພາສາລາວຖືກຕ້ອງສູງຂຶ້ນ, ຜູ້ເຂົ້າຮ່ວມໄດ້ປະສົບການຈາກການຮຽນຮູ້ ແລະ ການລົງມືປະຕິບັດເກີດຄວາມສົນໃຈ, ມີຄວາມຕື່ນຕົວ, ມີຄວາມສຸກກັບການເຝິກປະຕິບັດ ເຊິ່ງກໍໃຫ້ເກີດຄວາມສາມາດ, ຄວາມຄິດ ແລະ ກະຕຸ້ນໃຫ້ຜູ້ເຂົ້າຮ່ວມກິດຈະກຳໄດ້ໃຊ້ທັກສະທາງພາສາລາວໄດ້ຢ່າງເຕັມທີ່, ຊ່ວຍໃຫ້ມີໂອກາດສ້າງປະຕິສຳພັນກັບເພື່ອນຮ່ວມງານຕະຫຼອດຈົນສາມາດສ້າງຄວາມຮູ້ໄດ້ດ້ວຍຕົນເອງ, ນຳຄວາມຮູ້ທີ່ໄດ້ເຝິກໄປນຳໃຊ້ເຂົ້າໃນໃນທຸກໆສະຖານະການຈິງໄດ້ຢ່າງຖືກຕ້ອງ ແລະ ຄ່ອງແຄ້ວ.

## ຂໍ້ຂັດແຍ່ງ

ພວກຂ້າພະເຈົ້າ ທີມງານນັກຄົ້ນຄວ້າ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຜົນປະໂຫຍດແອບແຝງໃດໆ ກັບອົງກອນສະເໜີທຶນ.

## ເອກະສານອ້າງອີງ


Center, T. D. (1998). *Lao Language 1. Use for 11+3 teacher system in year 1*. vientain: Ministry of Education an (Center, (1998)) Sports Publishing House.

Center, T. D. (2009). *Lao Language 2. Use for 11+3 teacher system in year* . vientain: Ministry of Education an (Center, (1998)) Sports Publishing House.

Center, T. D. (2009). *Lao Language 3. Use for 11+3 teacher system in year 3*. vientain: Ministry of Education an (Center, (1998)) Sports Publishing House.

CHANHTHAHONG, K. S. (2023). The Development of Using Lao Language for Communication of Teacher in Phonethong District, Luangprabang Province Academic year 2020 - 2021. *Souphanouvong University Journal of Multidisciplinary Research and Development, 9*(1), 169-179. doi:https://doi.org/10.69692/SUJMRD0901168

Holanouphab, S. (2005). *Lao language used by the Faculty of Letters.* Vientaine: Department of Lao Language -Media, National University.

INVANKHAM, M. ,. (2023). Study of student’ learning outcomes through 5E method in teaching Lao Language (critical listening) for students of Lao language and Literature program academic year 2020 - 2021. *SU journal*, 288 -297.

Jirawat Petcharat. (2560). The Ability in Thai Usage of the Bachelor’s Degree Students Rajamangala University of Technology Thanyabur. *Naresuan University Journalism*.

Kotakoon., S. (2013). *Educational Psychology.* Bangkok: Chulalongkorn University Publishing House.

Minister, O. o. (2009). *Decree on the Organization and Activities of Souphanouvong University.* Vientiane: Office of Minister.

Ministry of Education and Sports. (2015). *Vision until 2030, Education Strategy until 2025 and the 8th 5-Year Education and Sports Development Plan.* Vientiane: Office of the Ministry of Education and Sports Printing.

Samseena, Arsiya Wanaelah* , Manavavee Mamah, Nurhuda Sadama and Affan Sama Yapha. (1998). Yala Rajabhat University Attitudes towards Studentsthe Importance of Malay Language in ASEAN Community and Guideline for Developing the Teaching Malay languageFaculty. *Yala Rajabhat University*.

Sanmani, K. (1998). *Language Theory, for Teacher Training Schools, 11+3 System.* Vientaine: Ministry of Education and Sports, Teacher Development Center.

Sports, M. o. (2009). *Decree on the Organization and Activities of Souphanouvong University No. 099/PM,* . vientaine: Ministry of Education and Sports.

Srisat, B. (2017). *Preliminary research, (10 th edition).* Bangkok: Suwiriyasan Company Limited.

Thongmeexay, K. (2016). *Lao languageand literature course for 1st year university students.* Vientiane: Ministry of Education and Sports.
Wacharaporn, C. (2017). The Study Of Learning Achievement And Problem Solving Abilities Of Tenth Grade Students Taught By Heuristics Thinking Process. *Veridian E-Journal, 2*(10), 1417-1434. Retrieved from https://he02.tci-thaijo.org/index.php/Veridian-E-Journal/article/view/105863/83944

ຕາຕະລາງທີ 1: ປຽບທຽບຜົນການເຝິກແກ້ໄຂບັນຫາການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູທີ່ເປັນຄົນຊົນເຜົ່າ

| ຜົນການເຝິກ | ຄະແນນລວມ | ກຸ່ມຕົວຢ່າງ | ຄະແນນສະເລ່ຍ | ຄ່າຜັນປ່ຽນມາຕະຖານ | ສະຖິຕິທົດສອບ | ການປຽບທຽບສົມມຸດຖານ |
|---|---|---|---|---|---|---|
| ກ່ອນການທົດລອງ | 497 | 40 | 12.43 | 2.85 | 4.33 | 0.00 |
| ຫຼັງການທົດລອງ | 581 | 40 | 14.53 | 2.16 | | |

ຕາຕະລາງທີ 2: ປຽບທຽບຄວາມສາມາດໃນການແກ້ໄຂບັນຫາການເຝິກໃຊ້ພາສາລາວໃຫ້ຖືກຕ້ອງ ຂອງຄູທີ່ເປັນຄົນຊົນເຜົ່າ

| ຜົນການເຝິກ | ຄະແນນລວມ | ກຸ່ມຕົວຢ່າງ | ຄະແນນສະເລ່ຍ | ຄ່າຜັນປ່ຽນມາຕະຖານ | ສະຖິຕິທົດສອບ | ການປຽບທຽບສົມມຸດຖານ |
|---|---|---|---|---|---|---|
| ກ່ອນການທົດລອງ | 504 | 40 | 12.60 | 2.44 | 11.94 | 0.00 |
| ຫຼັງການທົດລອງ | 634 | 40 | 15.85 | 2.13 | | |

ຕາຕະລາງທີ 3: ປຽບທຽບຜົນຄະແນນຄວາມສາມາດໃນການແກ້ໄຂບັນຫາແຕ່ລະດ້ານ

| ຄວາມສາມາດການແກ້ບັນຫາ | ຄະແນນເຕັມ | ຄະແນນສະເລ່ຍ | ຄ່າຜັນປ່ຽນມາດຕະຖານ | ແປຄວາມໝາຍ |
|---|---|---|---|---|
| ດ້ານການກຳນົດບັນຫາ | 5 | 3.73 | 0.68 | ຫຼາຍ |
| ດ້ານການວິເຄາະສາເຫດຂອງບັນຫາ | 5 | 3.43 | 0.71 | ປານກາງ |
| ດ້ານການແກ້ໄຂບັນຫາ | 5 | 3.48 | 0.75 | ປານກາງ |
| ດ້ານການກວດສອບການແກ້ບັນຫາ | 5 | 3.98 | 0.73 | ຫຼາຍ |
| **ລວມ** | | **3.65** | **0.75** | **ຫຼາຍ** |

ຕາຕະລາງທີ 4: ຜົນສຶກສາທັດສະນະຄະຕິທີ່ມີຕໍ່ການຈັດການເຝິກການໃຊ້ພາສາລາວໃຫ້ຖືກຕ້ອງຂອງຄູ

| ລດ | ເນື້ອໃນການປະເມີນ | ທັດສະນະຄະຕິ | | |
|---|---|---|---|---|
| | | $\bar{X}$ | S.D | ແປຄວາມໝາຍ |
| 1 | ດ້ານເນື້ອໃນບົດຮຽນ | 3.93 | 0.73 | ດີ |
| 2 | ດ້ານວິທີການນຳສະເໜີ | 3.96 | 0.73 | ດີ |
| 3 | ດ້ານກິດຈະກຳການຮຽນ - ການສອນ | 3.94 | 0.73 | ດີ |
| 4 | ດ້ານສະພາບແວດລ້ອມ | 3.85 | 0.72 | ດີ |
| 5 | ດ້ານການວັດ ແລະ ປະເມີນຜົນ | 3.80 | 0.73 | ດີ |
| 6 | ດ້ານການນຳໄປໃຊ້ | 3.89 | 0.70 | ດີ |
| | **ສະເລ່ຍລວມ** | **3.89** | **0.73** | **ດີ** |